ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ

010

ເລກທີ______/ຂບຊ.

ບໍລິຄຳໄຊ, ວັນທີ 13 JUL 2015.

# ຄຳສັ່ງແນະນຳ
## ຂອງເຈົ້າແຂວງບໍລິຄຳໄຊ
## ວ່າດ້ວຍຢຸດຕິການຕັ້ງສະນຳ

ເຖິງ : ບັນດາທ່ານເຈົ້າເມືອງ 7 ຕົວເມືອງ, ຫົວໜ້າພະແນກການ, ກອງບັນຊາການທະຫານ, ກອງບັນຊາການ ປກສ, ອົງການ ແລະ ຫ້ອງການ ອ້ອມຂ້າງແຂວງ.

ເລື່ອງ: ຢຸດຕິການຕັ້ງສະນຳ.

- ອີງຕາມ: ກົດໝາຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003 ໝວດທີ 3 ມາດຕາ 14 ຂໍ້ 8 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານຄຸ້ມຄອງພົນລະເມືອງຂອງທ້ອງຖິ່ນ.
- ອີງຕາມ: ຄຳສັ່ງນາຍົກລັດຖະມົນຕີ ເລກທີ 04/ນຍ, ລົງວັນທີ 12 ເມສາ 2002 ວ່າດ້ວຍການຈັດສັນອາຊີບ ແລະ ພູມລຳເນົາຄົງທີ່ໃຫ້ປະຊາຊົນ.
- ອີງຕາມ: ສະພາບຕົວຈິງການຍົກຍ້າຍທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍຂອງພົນລະເມືອງ.

ສະນຳ ແມ່ນສັບຄຳເວົ້າຂອງທ້ອງຖິ່ນມີລັກສະນະແຕກຕ່າງກັນອີງຕາມແຕ່ລະພູມມີສາດຂອງແຕ່ລະປະເທດ ຕົວຢ່າງ ປະເທດໄທ ເອີ້ນວ່າ ສະລຳ ແມ່ນຊຸມຊົນແອອັດຂະໜາດໃຫຍ່ໃຈກາງຕົວເມືອງ, ສ່ວນ ສປປ ລາວ ໂດຍສະເພາະເຂດພູດອຍ ສະນຳແມ່ນກຸ່ມຄົນທີ່ເຄື່ອນຍ້າຍໄປຕັ້ງຖິ່ນຖານຢູ່ໃນພື້ນທີ່ໃດໜຶ່ງໃນເຂດຊົນນະບົດຫ່າງໄກສອກຫຼີກແບບບໍ່ຖືກຕ້ອງຕາມລະບຽບກົດໝາຍ. ໃນໄລຍະຜ່ານມາພັກລັດຖະບານກໍ່ຄືຄະນະພັກອຳນາດການປົກຄອງແຂວງບໍລິຄຳໄຊພວກເຮົາ ໄດ້ຕັ້ງໜ້າປະຕິບັດແນວທາງນະໂຍບາຍຂອງພັກ-ລັດ ໂດຍສະເພາະແມ່ນການຫັນເອົາພະນັກງານການນຳຫຼັກແຫຼ່ງ ແລະ ພະນັກງານວິຊາການລົງກໍ່ສ້າງຮາກຖານການເມືອງພັດທະນາຊົນນະບົດຮອບດ້ານ, ຈັດສັນອາຊີບຄົງທີ່, ຈັດສັນພູມລຳເນົາຄົງທີ່, ເຕົ້າໂຮມບ້ານນ້ອຍເຂົ້າເປັນບ້ານໃຫຍ່ ເພື່ອສະດວກໃນການຄຸ້ມຄອງ ແລະ ພັດທະນາຮອບດ້ານໃຫ້ປະຊາຊົນໃນທົ່ວແຂວງ, ຊຶ່ງເປັນແຜນນະໂຍບາຍທີ່ສຳຄັນໜຶ່ງຂອງພັກ-ລັດພວກເຮົາ.

ຜ່ານການຈັດຕັ້ງປະຕິບັດຕົວຈິງຢູ່ແຂວງບໍລິຄຳໄຊ ພວກເຮົາສັງເກດເຫັນວ່າ: ແຕ່ລະທ້ອງຖິ່ນໄດ້ພະຍາຍາມກຳນົດແຜນພັດທະນາ, ກຳນົດເຂດຈັດສັນອາຊີບ ແລະ ພູມລຳເນົາຄົງທີ່ໃຫ້ແກ່ປະຊາຊົນ; ມີການປະສານສົມທົບກັບຄະນະພັກອຳນາດການປົກຄອງທ້ອງຖິ່ນເປັນຢ່າງດີ ແລະ ມີຜົນສຳເລັດໃນຫຼາຍດ້ານ ເຮັດໃຫ້ທົ່ວແຂວງມີຄວາມສະຫງົບໂດຍພື້ນຖານ, ເສດຖະກິດ-ສັງຄົມ ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ພື້ນຖານໂຄງລ່າງໄດ້ຮັບການພັດທະນາເຮັດໃຫ້ຊົນນະບົດຍັບເຂົ້າໃກ້ກັບຕົວເມືອງ. ການຈັດສັນເຕົ້າໂຮມບ້ານນ້ອຍເຂົ້າເປັນບ້ານໃຫຍ່ຈາກເມື່ອກ່ອນມີ

332 ບ້ານ ໃນປີ 2006, ມາເຖິງປະຈຸບັນມີ 296 ບ້ານ ຫຼຸດລົງ 36 ບ້ານ ອັນໄດ້ເຮັດໃຫ້ບັນດາບ້ານໃຫຍ່ໃນຊົນນະບົດໄດ້ກາຍເປັນຕົວເມືອງເທື່ອລະກ້າວ, ຊີວິດການເປັນຢູ່ຂອງປະຊາຊົນທັງດ້ານວັດຖຸ ແລະ ຈິດໃຈນັບມື້ດີຂຶ້ນເປັນກ້າວໆມາ, ຈຳນວນຄອບຄົວບໍ່ທັນພົ້ນທຸກໃນເມື່ອກ່ອນມີ 13.904 ຄອບຄົວ ໃນປີ 2006, ມາເຖິງປະຈຸບັນຍັງເຫຼືອພຽງ 2.256 ຄອບຄົວ ກວມ 4,82% ຂອງຈຳນວນຄອບຄົວທັງໝົດ 46.742 ຄອບຄົວ.

ຄຽງຄູ່ກັບຜົນງານດັ່ງກ່າວ, ໃນການປະຕິບັດຕົວຈິງຍັງພົບຄວາມຫຍຸ້ງຍາກຫຼາຍດ້ານ ເປັນຕົ້ນ: ການດຳລົງຊີວິດຂອງປະຊາຊົນບາງທ້ອງຖິ່ນຍັງເລື່ອນລອຍ, ປະຊາຊົນຈຳນວນໜຶ່ງອອກຈາກຄອບຄົວຈາກບ້ານເຄື່ອນຍ້າຍໄປມາຕັ້ງເຮືອນຕາມລຳພັງໃຈ, ມີການຕັ້ງສະນຳຢູ່ບາງກຸ່ມບ້ານ, ບາງຈຸດບ່ອນທີ່ເສັ້ນທາງໄປມາຫາສູ່ກັນບໍ່ສະດວກ, ໂດຍອາໃສເງື່ອນໄຂທຳການຜະລິດ, ການທຳມາຫາກິນເປັນຂໍ້ອ້າງ, ຈຳນວນໜຶ່ງແມ່ນປະຊາຊົນຢູ່ພາຍໃນເມືອງເອງ, ຈຳນວນໜຶ່ງມາຈາກບັນດາແຂວງໃກ້ຄຽງລຽບຕາມຊາຍແດນມີລັກສະນະເປັນຂະບວນ ແລະ ມີທ່າອ່ຽງຫລາຍຂຶ້ນ. ນອກນັ້ນຍັງມີປະຊາຊົນຈຳນວນໜຶ່ງຍົກຍ້າຍມາແບບບໍ່ຖືກຕ້ອງຕາມລະບຽບກົດໝາຍ, ເປັນການສ້າງຄວາມສັບສົນໃຫ້ຄະນະພັກອຳນາດການປົກຄອງທ້ອງຖິ່ນບໍ່ໜ້ອຍ ໂດຍສະເພາະແມ່ນ: ການຄຸ້ມຄອງສຳມະໂນຄົວ, ເດັກໃນເກນອາຍຸບໍ່ໄດ້ເຂົ້າໂຮງຮຽນ, ອັດຕາການສັກຢາກັນພະຍາດບໍ່ບັນລຸຕາມຄາດໝາຍ ເປັນຊ່ອງຫວ່າງໃຫ້ແກ່ຄົນບໍ່ດີສວຍໃຊ້ເພື່ອຕໍ່ຕ້ານກັບແນວທາງນະໂຍບາຍຂອງພັກ-ລັດ , ບໍ່ເຄົາລົບລະບຽບກົດໝາຍ, ສ້າງຄວາມຫຍຸ້ງຍາກໃຫ້ແກ່ການຄຸ້ມຄອງຂອງເຈົ້າໜ້າທີ່, ທຳລາຍປ່າໄມ້,ຈັບຈອງດິນຕາມລຳພັງໃຈ, ພົວພັນກັບການຄ້າຂາຍສິ່ງເສບຕິດ ແລະ ອື່ນໆ.

ເພື່ອເຮັດໃຫ້ສະພາບດັ່ງກ່າວມີທ່າອ່ຽງຫຼຸດລົງ ແລະ ກ້າວໄປເຖິງການຢຸດຕິຢ່າງສິ້ນເຊີງ, ປະຊາຊົນບັນດາເຜົ່າມີການທຳມາຫາກິນຢ່າງຖືກຕ້ອງ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ໄດ້ຮັບການແກ້ໄຂຢ່າງຖືກຕ້ອງນັ້ນ.

## ເຈົ້າແຂວງ-ແຂວງບໍລິຄຳໄຊ ຈຶ່ງອອກຄຳສັ່ງແນະນຳ ດັ່ງນີ້:

1. ໃຫ້ອຳນາດການປົກຄອງແຕ່ລະເມືອງອອກແຈ້ງການແນະນຳແຕ່ລະບ້ານສຳຫຼວດກວດກາພື້ນທີ່ຄຸ້ມຄອງຂອງຕົນຖ້າຍັງປະກົດມີປະຊາຊົນຕັ້ງສະນຳ ໃຫ້ມີການສຶກສາ-ອົບຮົມກ່າວເຕືອນ, ປຸກລະດົມໃຫ້ຢຸດເຊົາແລ້ວກັບຄືນບ້ານເດີມຂອງຕົນ ເພື່ອດຳລົງຊີວິດໃຫ້ຖືກຕ້ອງຕາມລະບຽບກົດໝາຍ. ພ້ອມດຽວກັນກໍ່ຫ້າມເດັດຂາດບໍ່ໃຫ້ປະຊາຊົນໄປຕັ້ງສະນຳຕື່ມອີກ ແລະ ຫ້າມບໍ່ໃຫ້ມີການຍົກຍ້າຍປະຊາຊົນຈາກເມືອງໜຶ່ງໄປຢູ່ເມືອງອື່ນກ່ອນໄດ້ຮັບອະນຸຍາດຈາກແຂວງ.

2. ໃຫ້ອຳນາດການປົກຄອງແຕ່ລະເມືອງຈົ່ງເປັນເຈົ້າການປະສານສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງຂອງແຂວງເພື່ອລົງສຳຫລວດ, ເກັບກຳຂໍ້ມູນການຕັ້ງສະນຳຂອງປະຊົນຢູ່ໃນພື້ນທີ່ຂອງແຕ່ລະບ້ານຢ່າງລະອຽດແລ້ວພ້ອມກັນປຶກສາຫາລືວິທີການແກ້ໄຂຮ່ວມກັນ ຈຶ່ງນຳສະເໜີຂໍທິດຊີ້ນຳຈາກແຂວງ ຈຶ່ງນຳໄປຈັດຕັ້ງປະຕິບັດ.

3. ມອບໃຫ້ພະແນກພາຍໃນແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການ ປກສ ແຂວງ, ຫ້ອງການພັດທະນາຊົນນະບົດລຶບລ້າງຄວາມທຸກຍາກແຂວງ ແຕ່ງຕັ້ງຄະນະຮັບຜິດຊອບຂອງຕົນລົງສົມທົບກັບແຕ່ລະເມືອງ ເພື່ອກວດກາເກັບກຳຂໍ້ມູນເພື່ອລາຍງານ ແລະ ຂໍທິດຊີ້ນຳຈາກແຂວງ.

4. ເພື່ອຮັບປະກັນໃຫ້ແກ່ການຈຳກັດຈຳນວນການຕັ້ງສະນຳໃນທົ່ວແຂວງໃຫ້ຫຼຸດໜ້ອຍຖອຍລົງກ້າວໄປເຖິງຢຸດຕິໃຫ້ໄດ້ຮັບຜົນດີນັ້ນ, ອຳນາດການປົກຄອງແຕ່ລະເມືອງ ຕ້ອງແຕ່ງຕັ້ງຄະນະຮັບຜິດຊອບ, ໂດຍແມ່ນຫ້ອງການພາຍໃນເມືອງເປັນໃຈກາງຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ. ພ້ອມກັນນັ້ນ, ກໍຕ້ອງເອົາໃຈໃສ່ສຶກສາ-ອົບຮົມປະຊາຊົນໃຫ້ເຂົ້າໃຈແຜນນະໂຍບາຍຂອງພັກ-ລັດ ຢ່າງເລິກເຊິ່ງ ແລະ ຮູ້ສຶກຕື່ນຕົວຈັດຕັ້ງປະຕິບັດ.

5. ໃນກໍລະນີທີ່ທ້ອງຖິ່ນໃດໜຶ່ງທີ່ມີການຮ້ອງຂໍຂອງປະຊາຊົນທີ່ຈໍາເປັນໃນການຈັດສັນພູມລໍາເນົາ, ຈັດສັນອາຊີບຄົງທີ່ ແມ່ນໃຫ້ເມືອງເປັນຜູ້ຄົ້ນຄ້ວາພິຈາລະນາ ແລະ ມີຄວາມເຫັນນໍາສະເໜີແຂວງພິຈາລະນາຕົກລົງ.

6. ຜ່ານການຈັດຕັ້ງປະຕິບັດແຕ່ລະໄລຍະຕ້ອງມີການສະຫຼຸບຕີລາຄາຖອດຖອນບົດຮຽນແລ້ວລາຍງານແຂວງເພື່ອຊາບ.

7. ທ່ານເຈົ້າເມືອງ, ຫົວໜ້າພະແນກການ, ກອງບັນຊາການທະຫານແຂວງ, ກອງບັນຊາການ ປກສ ແຂວງ, ອົງການ ແລະ ຫ້ອງການອ້ອມຂ້າງແຂວງຈົ່ງຮັບຮູ້ ແລະ ປະຕິບັດຄໍາສັ່ງແນະນໍາສະບັບນີ້ຢ່າງເຂັ້ມງວດ.

8. ຄໍາສັ່ງແນະນໍາສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ-ແຂວງບໍລິຄໍາໄຊ**

ແຂວງ ບໍລິຄໍາໄຊ

ເຈົ້າ ແຂວງ

ດຣ. ກອງແກ້ວ ໄຊສົງຄາມ

Dr. Kongkeo XAYSONGKHAM